ທະນາຄານ ເອຊີລີດາ ລາວ ຈຳກັດ

ACLEDA Bank Lao Ltd.

*ປະຊາທະນາຄານທີ່ທ່ານໄວ້ວາງໃຈ*

# ເອກະສານລາຍງານການເງິນ

# 2018




ເອຊີລີດາ ທັນໃຈ ACLEDA ThanChai

# ບົດລາຍງານຂອງຜູ້ກວດສອບບັນຊີອິດສະຫຼະ

## ເຖິງ: ສະພາບໍລິຫານ ທະນາຄານ ເອຊີລີດາ ລາວ ຈຳກັດ.

### ຄຳເຫັນ

ພວກຂ້າພະເຈົ້າ ໄດ້ດຳເນີນກວດສອບເອກະສານລາຍງານການເງິນຂອງ ທະນາຄານ ເອຊີລີດາ ລາວ ຈຳກັດ (“ທະນາຄານ”) ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນນະ ວັນທີ 31 ທັນວາ 2018,ໃບລາຍງານຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງທຶນຂອງເຈົ້າຂອງ ແລະ ຄັງສຳຮອງອື່ນໆ ແລະ ໃບລາຍງານກະ-ແສເງິນສົດສຳລັບປີສິ້ນສຸດ ແລະ ບົດອະທບາຍຊ້ອນ ທ້າຍເອກະສານລາຍງານການເງິນ, ຊຶ່ງປະກອບດ້ວຍສັງລວມນະໂຍບາຍການບັນຊີທີ່ສຳຄັນ ແລະ ບົດອະທິບາຍແບບເພີ່ມເຕີມອື່ນໆ.

ໃນຄວາມຄິດເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນແມ່ນໄດ້ນຳສະເໜີຢ່າງ ສົມເຫດສົມຜົນໃນທຸກສາລະສຳຄັນ, ໃບລາຍງານຖານະການເງິນຂອງທະນາຄານນະ ວັນທີ 31ທັນວາ 2018 ແລະ ຜົນການດຳເນີນງານທາງດ້ານການເງິນ ແລະ ກະແສເງິນສົດສຳລັບປີການບັນຊີ ສິ້ນສຸດ ແມ່ນສອດຄ່ອງກັບຫຼັກການບັນຊີຂອງທະນາຄານແຫ່ງສປປລາວ ແລະ ຫຼັກການບັນຊີໃນ ສປປ ລາວ.

### ພື້ນຖານການສະແດງຄຳເຫັນ

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບ ຕາມມາດຕະຖານການກວດສອບບັນຊີສາກົນ (“ISAs”). ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າ ໄດ້ກ່າວໄວ້ໃນສ່ວນຂອງຄວາມຮັບຜິດຊອບ ຂອງຜູ້ກວດສອບບັນຊີຕໍ່ເອກະສານລາຍງານການເງິນໃນການລາຍງານຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າມີຄວາມເປັນເອກະລາດຈາກທະນາຄານ ໂດຍສອດຄ່ອງກັບສະພາມາດຕະຖານສາກົນດ້ານຈັນຍາບັນທາງບັນຊີ ສຳລັບນັກວິຊາຊີບບັນຊທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນ ແລະ ພວກຂ້າພະເຈົ້າໄດ້ປະຕິບັດຕາມຄວາມຮັບຜິດຊອບດ້ານຈັນຍາບັນອື່ນໆ ເຊິ່ງເປັນໄປຕາມຂໍ້ກຳນົດເຫຼົ່ານັ້ນ. ພວກຂ້າພະເຈົ້າເຊື່ອວ່າຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບພຽງພໍ ແລະ ເໝາະສົມເພື່ອໃຊ້ເປັນເກນໃນການສະແດງຄຳເຫັນຂອງພວກຂ້າພະເຈົ້າ.

### ເລື່ອງອື່ນໆ

ເອກະສານລາຍງານການເງິນຂອງທະນາຄານສຳລັບປີການບັນຊີສິ້ນສຸດວັນທີ 31 ທັນວາ 2017, ແມ່ນໄດ້ຖືກກວດສອບຈາກບໍລິສັດຜູ້ກວດສອບອື່ນຊຶ່ງລາຍງານໃນວັນທີ 22 ມີນາ 2018.

### ຄວາມຮັບຜິດຊອບຂອງຜູ້ບໍລິຫານຕໍ່ເອກະສານລາຍງານການເງິນ

ຜູ້ບໍລິຫານມີໜ້າທີ່ຮັບຜິດຊອບໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນທີ່ຖືກຕ້ອງຕາມລະບຽບຫຼັກການບັນຊີຂອງທະນາຄານແຫ່ງ ສປປ ລາວ ແລະ ຫຼັກການບັນຊີໃນ ສປປ ລາວ ແລະ ຮັບຜິດຊອບກ່ຽວກັບການຄວບຄຸມພາຍໃນທີ່ຜູ້ບໍລິຫານພິຈາລະນາວ່າມີຄວາມຈຳເປັນໃນການກະກຽມເອກະສານລາຍງານການເງິນທີ່ປາດສະຈາກການສະແດງຂໍ້ມູນທີ່ບິດເບືອນຈາກຄວາມເປັນຈິງອັນເປັນສາລະສຳຄັນບໍ່ວ່າຈະເກີດຈາກການສໍ້ໂກງ ແລະ ຂໍ້ຜິດພາດອື່ນໆ. ໃນການກະກຽມເອກະສານລາຍງານການເງິນຜູ້ບໍລິຫານມີຄວາມຮັບຜິດຊອບການປະເມີນຄວາມສາມາດຂອງທະນາຄານໃນການດຳເນີນງານຕໍ່ເນື່ອງ, ການເປີດເຜີຍ, ຕາມຄວາມເໝາະສົມ, ເລື່ອງທີ່ ກ່ຽວກັບການດຳເນີນງານຕໍ່ເນື່ອງ ແລະ ການນຳໃຊ້ພື້ນຖານການບັນຊີແບບຕໍ່ເນື່ອງເວັ້ນເສຍແຕ່ຜູ້ບໍລິຫານມີຄວາມຕັ້ງໃຈຈະເລີກ ຫຼື ຢຸດການດຳເນີນງານ ຫຼື ບໍ່ສາມາດດຳເນີນງານຕໍ່ເນື່ອງໄປໄດ້.

### ຄວາມຮັບຜິດຊອບຂອງຜູ້ກວດສອບບັນຊີຕໍ່ການກວດສອບເອກະສານລາຍງານການເງິນ

ການກວດສອບຂອງພວກຂ້າພະເຈົ້າ ມີວັດຖຸປະສົງເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນໂດຍລວມແມ່ນ ປາສະຈາກການສະແດງຂໍ້ມູນບິດເບືອນຈາກຄວາມເປັນຈິງອັນເປັນສາລະສຳຄັນ, ບໍ່ວ່າຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ, ແລະ ອອກບົດລາຍງານຂອງຜູ້ກວດສອບບັນຊີເຊິ່ງລວມຄວາມເຫັນຂອງພວກຂ້າພະເຈົ້າຢູ່ນຳ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນຄືຄວາມເຊື່ອໝັ້ນໃນລະດັບສູງ, ແຕ່ບໍ່ໄດ້ເປັນການຮັບປະກັນວ່າການປະຕິບັດການກວດສອບຕາມມາດຕະຖານການກວດສອບສາກົນ(“ISAs”)ຈະສາມາດກວດພົບຂໍ້ມູນທີ່ບິດເບືອນຈາກຄວາມເປັນຈິງອັນເປັນສາລະສຳຄັນທີ່ມີຢູ່ໄດ້ສະເໝີໄປ. ຂໍ້ມູນທີ່ບິດເບືອນຈາກຄວາມເປັນຈິງອາດເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ຖືວ່າມີສາລະສຳຄັນ, ຖ້າຫາກວ່າແຕ່ລະລາຍການ ຫຼື ທຸກລາຍການລວມກັນ, ຈະມີຜົນຕໍ່ການຕັດສິນໃຈ

ທາງເສດຖະກິດຂອງຜູ້ໃຊ້ ເອກະສານລາຍງານການເງິນເຫຼົ່ານີ້ເປັນພື້ນຖານ.

ໃນການກວດສອບຂອງພວກຂ້າພະເຈົ້າຕາມມາດຕະຖານການກວດສອບບັນຊີ, ພວກຂ້າພະເຈົ້າໄດ້ໃຊ້ດຸນພິນິດ ແລະ ການສັງເກດ ແລະ ສິ່ງໄສ່ຢ່າງຜູ້ປະກອບວິຊາຊີບຕະຫຼອດການກວດສອບ. ການປະຕິບັດງານຂອງພວກຂ້າພະເຈົ້າລວມເຖິງ:

- ລະບຸ ແລະ ປະເມີນຄວາມສ່ຽງຈາກການສະແດງຂໍ້ມູນທີ່ບິດເບືອນຈາກຄວາມເປັນຈິງອັນເປັນສາລະສຳຄັນໃນເອກະສານລາຍງານການເງິນ, ບໍ່ວ່າຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດອອກແບບ ແລະ ປະຕິບັດງານຕາມວິທີການກວດສອບເພື່ອຕອບສະໜອງຕໍ່ຄວາມສ່ຽງເຫຼົ່ານັ້ນ ແລະ ໄດ້ຫຼັກຖານການກວດສອບບັນຊີທີ່ພຽງພໍ ແລະ ເໝາະສົມເພື່ອເປັນເກນໃນການສະແດງຄວາມເຫັນຂອງພວກຂ້າພະເຈົ້າຄວາມສ່ຽງທີ່ບໍ່ພົບຂໍ້ມູນທີ່ບິດເບືອນຈາກຄວາມເປັນຈິງອັນເປັນສາລະ ສຳຄັນຊຶ່ງເປັນຜົນຈາກການສໍ້ໂກງຈະສູງກວ່າຂໍ້ຜິດພາດເນື່ອງມາຈາກການສໍ້ໂກງອາດຈະກ່ຽວກັບການສົມຮູ້ຮ່ວມຄິດການປອມແປງເອກະສານຫຼັກຖານການຕັ້ງໃຈລະເວັ້ນການສະແດງຂໍ້ມູນການສະແດງຂໍ້ມູນທີ່ບໍ່ກົງກັບຄວາມເປັນຈິງ ຫຼື ການແຊກແຊງການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈໃນລະບົບການຄວບຄຸມພາຍໃນທີ່ກ່ຽວຂ້ອງກັບການກວດສອບເພື່ອອອກແບບວິທີການກວດສອບທີ່ມີຄວາມເໝາະສົມກັບສະຖານະການ, ແຕ່ບໍ່ແມ່ນເພື່ອຈຸດປະສົງໃນການສະແດງຄວາມເຫັນຕໍ່ຄວາມມີປະສິດທິຜົນຂອງການຄວບຄຸມພາຍໃນຂອງທະນາຄານ.
- ປະເມີນຄວາມເໝາະສົມຂອງນະໂຍບາຍການບັນຊີທີ່ຜູ້ບໍລິຫານນຳໃຊ້ແລະຄວາມສົມເຫດສົມຜົນຂອງການປະມານການທາງບັນຊີແລະການເປີດເຜີຍຂໍ້ມູນທີ່ທີ່ກ່ຽວຂ້ອງຊຶ່ງເຮັດຂຶ້ນໂດຍຜູ້ບໍລິຫານ.
- ສະຫຼຸບຄວາມເໝາະສົມຂອງການໃຊ້ຫຼັກການດຳເນີນງານຕໍ່ເນື່ອງຂອງການບັນຊີຂອງຜູ້ບໍລິຫານ ແລະ ຈາກຫຼັກຖານການກວດສອບບັນຊີທີ່ໄດ້ຮັບ. ຄວາມບໍ່ແນ່ນອນທີ່ເປັນສາລະສຳຄັນນັ້ນ ກ່ຽວກັບເຫດການ ຫຼື ເງື່ອນໄຂທີ່ອາດເປັນເຫດໃຫ້ເກີດຂໍ້ສົງໄສທີ່ສຳຄັນຕໍ່ຄວາມສາມາດຂອງທະນາຄານໃນການດຳເນີນງານຕໍ່ເນື່ອງ. ຫາກພວກຂ້າພະເຈົ້າສະຫຼຸບວ່າມີຄວາມບໍ່ແນ່ນອນທີ່ມີສາລະສຳຄັນພວກຂ້າພະເຈົ້າຕ້ອງໄດ້ກ່າວໄວ້ໃນບົດລາຍງານຂອງຜູ້ກວດສອບບັນຊີຂອງພວກຂ້າພະເຈົ້າເຖິງການເປີດເຜີຍທີ່ກ່ຽວຂ້ອງໃນເອກະສານລາຍງານການເງິນ ຫຼື ຖ້າການເປີດເຜີຍດັ່ງ ກ່າວບໍ່ພຽງພໍກັບການປັບປ່ຽນຄວາມເຫັນຂອງພວກຂ້າພະເຈົ້າ, ຂໍ້ສະຫຼຸບຂອງພວກຂ້າພະເຈົ້າ ຂຶ້ນຢູ່ກັບຫຼັກ ຖານການກວດສອບບັນຊີທີ່ໄດ້ຮັບຈົນເຖິງວັນທີໃນບົດລາຍງານກວດສອບບັນຊີຂອງພວກຂ້າພະເຈົ້າ. ຢ່າງໃດກໍຕາມ, ເຫດການ ຫຼື ສະຖານະການໃນອະນາຄົດອາດເປັນເຫດໃຫ້ສາຂາ ຕ້ອງຢຸດການດຳເນີນ ງານຕໍ່ເນື່ອງ.
- ປະເມີນການນຳສະເໜີໂຄງສ້າງ ແລະ ເນື້ອຫາຂອງເອກະສານລາຍງານການເງິນ, ລວມເຖິງການເປີດເຜີຍວ່າເອກະສານລາຍງານການເງິນເພື່ອສະແດງລາຍການ ແລະ ເຫດການໃນຮູບແບບທີ່ເຮັດໃຫ້ມີການນຳສະເໜີຂໍ້ມູນໂດຍຖືກຕ້ອງຕາມທີ່ຄວນ.

ພວກຂ້າພະເຈົ້າມີການພົວພັນກັບຜູ້ທີ່ມີໜ້າທີ່ໃນການກຳກັບດູແລກ່ຽວກັບຂອບເຂດ ແລະ ໄລຍະເວລາໃນການກວດສອບຕາມທີ່ ໄດ້ວາງແຜນໄວ້ປະເດັນທີ່ ມີສາລະສຳຄັນທີ່ ພົບຈາກການກວດສອບ,ລວມເຖິງຂໍ້ ບົກຜ່ອງທີ່ ມີສາລະສຳຄັນໃນລະບົບການຄວບຄຸມພາຍໃນຊຶ່ ງພວກຂ້າພະເຈົ້າ ໄດ້ກວດພົບໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

KPMG Lao Co. Ltd.

ບໍລິສັດ ເຄພີເອັມຈີ ລາວ ຈຳກັດ
ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 13 ມີນາ 2019

# ໃບລາຍງານຖານະການເງິນ

| | 2018<br>ກີບ | 2017<br>ກີບ |
|---|---|---|
| **ຊັບສິນ** | | |
| ເງິນສົດ ແລະ ເງິນຝາກກັບທະນາຄານອື່ນ | 164.001.093.098 | 209.954.999.424 |
| ເງິນຝາກຕາມລະບຽບການກັບທະນາຄານ ສ.ປ.ປ ລາວ | 20.256.770.508 | 18.051.502.440 |
| ເງິນໃຫ້ກູ້ຢືມແລະເງິນລ່ວງໜ້າໃຫ້ລູກຄ້າ,<br>ເງິນແຮສະເພາະສຸດທິ | 976.464.757.756 | 1.046.532.206.973 |
| ຊັບສິນບັດຄົງທີ່ທີ່ບໍ່ມີຕົວຕົນ | 11.081.496.361 | 6.626.964.612 |
| ຊັບສິນບັດຄົງທີ່ມີຕົວຕົນ | 28.425.004.103 | 29.319.066.638 |
| ຊັບສິນອື່ນໆ | 23.072.012.952 | 19.703.210.166 |
| **ລວມຍອດຊັບສິນ** | **1.223.301.134.778** | **1.330.187.950.253** |
| **ໜີ້ສິນ ແລະ ທຶນ** | | |
| **ໜີ້ສິນ** | | |
| ເງິນຝາກຈາກທະນາຄານອື່ນ | 49.960.905.589 | 118.083.009.789 |
| ເງິນຝາກຈາກລູກຄ້າ | 660.235.080.389 | 637.306.476.005 |
| ເງິນກູ້ຢືມ | 115.415.571.115 | 188.437.370.957 |
| ໜີ້ສິນອື່ນໆ | 42.725.230.015 | 50.937.721.324 |
| **ລວມຍອດໜີ້ສິນ** | **868.336.787.108** | **994.764.578.075** |
| **ທຶນ** | | |
| ທຶນຈົດທະບຽນ | 300.000.000.000 | 300.000.000.000 |
| ກຳໄລສະສົມ | 45.134.888.520 | 22.532.427.821 |
| ເງິນຄັງສຳຮອງຕາມກົດໝາຍ | 5.014.987.614 | 2.503.603.091 |
| ເງິນແຮລວມສິນເຊື່ອ | 4.814.471.536 | 10.387.341.266 |
| **ລວມຍອດທຶນ** | (354.964.347.670) | (335.423.372.178) |
| **ລວມຍອດໜີ້ສິນ, ທຶນ ແລະ ຄັງສຳຮອງອື່ນໆ** | **1.223.301.134.778** | **1.330.187.950.253** |

*ບົດສະຫຼຸບລາຍງານທາງການເງິນ ຕາມການແຈ້ງການຂອງ ທະນາຄານ ແຫ່ງ ສປປ ລາວ ສະບັບເລກທີ 338 / ທຫລ ລົງວັນທີ 13 ກັນຍາ 2012. ບົດລາຍງານທາງການເງິນ ທີ່ຖືກກວດສອບ ສາມາດເຂົ້າເບິ່ງໄດ້ທີ່ ເວັບໄຊທ໌ ຫຼື ທີ່ ທະນາຄານ.*

# ໃບລາຍງານຜົນການດຳເນີນງານ

| | 2018<br>ກີບ | 2017<br>ກີບ |
|---|---|---|
| ລາຍຮັບດອກເບ້ຍ | 131.720.470.869 | 142.251.783.958 |
| ລາຍຈ່າຍດອກເບ້ຍ | (48.371.278.957) | (55.233.818.220) |
| **ລາຍຮັບດອກເບ້ຍສຸດທິ** | **(83.349.191.912)** | **(87.017.965.738)** |
| ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ | 52.057.279.384 | 55.358.852.491 |
| ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ | (1.035.952.835) | (2.161.487.385) |
| **ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ ສຸດທິ** | **(51.021.326.549)** | **(53.197.365.106)** |
| ກຳໄລສຸດທິຈາກເງິນຕາຕ່າງປະເທດ | 1.319.684.312 | 2.342.589.948 |
| ລາຍຮັບອື່ນໆ | 11.572.869.210 | 10.723.047.100 |
| ລາຍຮັບການດຳເນີນງານຕ່າງໆ | 7.011.989.191 | 2.306.206.487 |
| **ລາຍຮັບອື່ນໆ** | **(19.904.542.713)** | **(15.371.843.535)** |
| ເງິນເດືອນ ແລະ ລາຍຈ່າຍອື່ນໆສຳລັບພະນັກງານ | (61.474.014.761) | (60.733.449.532) |
| ລາຍຈ່າຍບໍລິຫານທົ່ວໄປ | (34.126.934.516) | (29.605.440.805) |
| ຄ່າຫຼູ້ຍຫ້ຽນແລະຄ່າເຊື່ອມມູນຄ່າ | (13.853.083.411) | (12.858.312.821) |
| ລາຍຈ່າຍການດຳເນີນງານຕ່າງໆ | (1.495.062.455) | (3.029.785.559) |
| **ລວມລາຍຈ່າຍການດຳເນີນງານ** | **(110.949.095.143)** | **(106.226.988.717)** |
| **ກຳໄລສຸດທິຈາກການດຳເນີນງານ** | **43.325.966.031** | **49.360.185.662** |
| ເງິນແຮສະເພາະເງິນກູ້ | (15.025.495.178) | (15.445.158.138) |
| ເກັບຄືນເງິນແຮສະເພາະເງິນກູ້ | 6.939.682.131 | 8.537.226.258 |
| **ເງິນແຮສະເພາະສຸດທິ** | **(8.085.813.047)** | **(6.907.931.880)** |
| **ກຳໄລກ່ອນອາກອນ** | **35.240.152.984** | **42.452.253.782** |
| ອາກອນກຳໄລ | **(10.126.307.762)** | **(12.996.111.089)** |
| **ກຳໄລສຸດທິໃນປີ** | **25.113.845.222** | **29.456.142.693** |

# ໃບລາຍງານສ່ວນປ່ຽນແປງທຶນຂອງເຈົ້າຂອງ ແລະ ຄັງສຳຮອງອື່ນ

| | ທຶນຈົດທະບຽນ | ກຳໄລສະສົມ | ເງິນແຮລວມເງິນກູ້ | ຄັງສຳຮອງ ຕາມກົດໝາຍ | ລວມ |
|---|---|---|---|---|---|
| | ກີບ | ກີບ | ກີບ | ກີບ | ກີບ |
| **ຍອດເຫຼືອໃນວັນທີ 1 ມັງກອນ 2017** | **300.000.000.000** | **(4.420.111.781)** | **9.647.875.402** | **-** | **305.227.763.621** |
| ໂອນໄປຄັງສຳຮອງ | - | (2.503.603.091) | - | 2.503.603.091 | - |
| ຫັກເງິນແຮລວມເງິນກູ້ໃນປີ | - | - | 3.029.785.559 | - | 3.029.785.559 |
| ເກັບຄືນເງິນແຮລວມເງິນກູ້ໃນປີ | - | - | (2.306.206.487) | - | (2.306.206.487) |
| ຄວາມແຕກຕ່າງຈາກອັດຕາແລກປ່ຽນ | - | - | 15.886.792 | - | 15.886.792 |
| ກຳໄລໃນປີ | - | 29.456.142.693 | - | - | 29.456.142.693 |
| **ຍອດເຫຼືອໃນວັນທີ 31ທັນວາ2017 ແລະ ວັນທີ1ມັງກອນ2018** | **300.000.000.000** | **22.532.427.821** | **10.387.341.266** | **2.503.603.091** | **335.423.372.178** |
| ໂອນໄປຄັງສຳຮອງ | - | (2.511.384.523) | - | 2.511.384.523 | - |
| ຫັກເງິນແຮລວມເງິນກູ້ໃນປີ | - | - | 1.495.062.455 | - | 1.495.062.455 |
| ເກັບຄືນເງິນແຮລວມເງິນກູ້ໃນປີ | - | - | (7.011.989.191) | - | (7.011.989.191) |
| ຄວາມແຕກຕ່າງຈາກອັດຕາແລກປ່ຽນ | - | - | 2.990.624 | - | 2.990.624 |
| ຈັດປະເພດເງິນແຮສະເພາະຄືນໃໝ່ໃນປີ | - | - | (58.933.618) | - | (58.933.618) |
| ກຳໄລໃນປີ | - | 25.113.845.222 | - | - | 25.113.845.222 |
| **ຍອດເຫຼືອໃນວັນທີ 31ທັນວາ2018** | **300.000.000.000** | **45.134.888.520** | **4.814.471.536** | **5.014.987.614** | **354.964.347.670** |

# ໃບລາຍງານກະແສເງິນສົດ

| | 2018<br>ກີບ | 2017<br>ກີບ |
|---|---|---|
| **ກະແສເງິນສົດຈາກກິດຈະກຳການດຳເນີນງານ** | | |
| ກຳໄລ ກ່ອນອາກອນ | 35.240.152.984 | 42.452.253.782 |
| ລາຍການດັດແກ້: | | |
| ເງິນແຮໜີ້ທວງຍາກສຸດທິ | 2.568.886.311 | 7.631.510.952 |
| ລາຍຮັບດອກເບ້ຍ | (131.720.470.869) | (142.251.783.958) |
| ລາຍຈ່າຍດອກເບ້ຍ | 48.371.278.957 | 55.233.818.220 |
| ຄ່າຫຼູ້ຍຫ້ຽນ ແລະ ຄ່າເສື່ອມ | 13.853.083.411 | 12.858.312.821 |
| ຂາດທຶນຈາກການສະສາງຊັບສົມບັດຄົງທີ່ ແລະ ອຸປະກອນ | 165.687.303 | 50.303.171 |
| ກຳໄລຈາກອັດຕາແລກປ່ຽນ | (1.319.684.312) | (2.342.589.948) |
| ດອກເບ້ຍໄດ້ຮັບ | 131.938.931.925 | 141.696.419.889 |
| ດອກເບ້ຍທີ່ຈ່າຍ | (50.409.138.184) | (53.265.840.040) |
| ຈ່າຍອາກອນກຳໄລ | (12.059.387.714) | (6.516.223.352) |
| **ກຳໄລຈາກການດຳເນີນງານກ່ອນການປ່ຽນແປງ ຊັບສິນ ແລະ ໜີ້ສິນ ໃນການດຳເນີນງານ** | **36.629.339.812** | **55.546.181.537** |
| ເງິນຝາກບັງຄັບກັບທະນາຄານ ສ.ປ.ປ ລາວ | (2.205.268.068) | 2.017.118.558 |
| ເງິນຝາກມີກຳນົດຈາກທະນາຄານ ສ.ປ.ປ ລາວ | 11.267.600.000 | (2.761.000.000) |
| ເງິນໃຫ້ກູ້ຢືມ ແລະ ເງິນລ່ວງໜ້າໃຫ້ລູກຄ້າ | 66.656.443.849 | (72.570.986.201) |
| ຊັບສິນອື່ນໆ | (3.587.263.842) | 1.670.826.852 |
| ເງິນຝາກຈາກທະນາຄານອື່ນໆ | (68.122.104.200) | 37.767.996.692 |
| ເງິນຝາກຈາກລູກຄ້າ | 22.928.604.384 | 8.131.280.239 |
| ໜີ້ສິນອື່ນໆ | (4.241.552.130) | (11.941.808.379) |
| **ເງິນສົດສຸດທິຈາກກິດຈະກຳການດຳເນີນງານ** | **59.325.799.805** | **17.859.609.298** |
| **ກະແສເງິນສົດຈາກ ກິດຈະກຳການລົງທຶນ** | | |
| ຊື້ຊັບສົມບັດຄົງທີ່ | (9.534.878.002) | (16.173.908.751) |
| ຊື້ຊັບສົມບັດຄົງທີ່ທີ່ບໍ່ມີຕົວຕົນ | (7.567.980.357) | - |
| ລາຍໄດ້ຈາກການສະສາງຊັບສົມບັດຄົງທີ່ແລະອຸປະກອນ | 406.343.775 | 109.029.895 |
| **ເງິນສົດສຸດທິຈາກກິດຈະກຳການລົງທຶນ** | **(16.696.514.584)** | **(16.064.878.856)** |
| **ກະແສເງິນສົດຈາກ ກິດຈະກຳທາງການເງິນ** | | |
| ເງິນທີ່ໄດ້ຮັບ ຈາກການກູ້ຢືມ | 8.819.295.595 | 76.078.800.000 |
| ຊຳລະຄືນ ເງິນກູ້ຢືມ | (81.841.095.437) | (84.210.599.844) |
| **ເງິນສົດສຸດທິ ທີ່ເກີດຈາກກິດຈະກຳທາງການເງິນ** | **(73.021.799.842)** | **(8.131.799.844)** |
| ການປ່ຽນແປງ ເງິນສົດແລະລາຍການທຽບເທົ່າເງິນສົດສຸດທິ | **(30.392.514.621)** | **(6.337.069.402)** |
| ເງິນສົດແລະທຽບເທົ່າເງິນສົດໃນວັນທີ 1 ມັງກອນ | 193.378.999.424 | 204.362.404.369 |
| ຜົນກະທົບຈາກສ່ວນຕ່າງເງິນຕ່າງປະເທດ | (6.947.991.705) | (4.646.335.543) |
| **ເງິນສົດ ແລະ ທຽບເທົ່າເງິນສົດ ໃນວັນທີ 31 ທັນວາ** | **156.038.493.098** | **193.378.999.424** |

# ທີ່ຕັ້ງສາຂາ ຂອງ ທະນາຄານ ເອຊີລີດາ ລາວ ຈຳກັດ

## ສຳນັກງານໃຫຍ່

ອາຄານເລກທີ 372, ວົງວຽນດົງປາລານ ແລະ ຖົງປາຍນາ, ໜ່ວຍ 21, ບ້ານ ໂພນສະຫວັນເໜືອ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ, ສປປ ລາວ.
ໂທ: +856 (0)21 264 998 / 264 994, ແຟັກ: +856 (0)21 264 995
ອີເມລ: acladabank@acledabank.com.la, ເວັບໄຊທ໌: www.acledabank.com.la

## ສາຂາ ນະຄອນຫລວງວຽງຈັນ

ອາຄານເລກທີ 91, ຖະໜົນ ໜອງບອນ, ໜ່ວຍ 6, ບ້ານ ໜອງຈັນ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ, ສປປ ລາວ.
ໂທ: +856 (0)21 285 199, ແຟັກ: +856 (0)21 285 198, ອີເມລ: cs.vte@acledabank.com.la

## ສາຂາ ໄຊເສດຖາ

ອາຄານເລກທີ 415, ຖະໜົນ ກຳແພງເມືອງ, ໜ່ວຍ 30, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ, ສປປ ລາວ.
ໂທ: +856 (0)21 265 847, ແຟັກ: +856 (0)21 265 848, ອີເມລ: cs.xst@acledabank.com.la

## ສາຂາ ຈັນທະບູລີ

ອາຄານເລກທີ 118, ຖະໜົນ ທົ່ງຂັນຄຳ, ໜ່ວຍ 9, ບ້ານ ທົ່ງຕູມ, ເມືອງ ຈັນທະບູລີ, ນະຄອນຫລວງວຽງຈັນ, ສປປ ລາວ.
ໂທ: +856 (0)21 254 124, ແຟັກ: +856 (0)21 254 123, ອີເມລ: cs.ctl@acledabank.com.la

## ສາຂາ ສີໂຄດຕະບອງ

ອາຄານເລກທີ 99, ຖະໜົນ 13 ເໜືອ, ໜ່ວຍ 8, ບ້ານ ໜອງໜ້ຽວ, ເມືອງ ສີໂຄດຕະບອງ, ນະຄອນຫລວງວຽງຈັນ, ສປປ ລາວ.
ໂທ: +856 (0)21 620 141, ແຟັກ: +856 (0)21 620 129, ອີເມລ: cs.skb@acledabank.com.la

## ສາຂາ ສວນມອນ

ຖະໜົນ ທ່າເດື່ອ, ໜ່ວຍ 11, ບ້ານ ສວນມອນ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ, ສປປ ລາວ.
ໂທ:+856 (0)21 485 116, ແຟັກ:+856 (0)21 485 121, E-mail: cs.sum@acledabank.com.la

## ສາຂາ ບໍລິຄຳໄຊ

ຖະໜົນ 13 ໃຕ້, ໜ່ວຍ 4, ບ້ານ ມີໄຊ, ເມືອງ ປາກຊັນ, ແຂວງ ບໍລິຄຳໄຊ, ສປປ ລາວ.
ໂທ:+856 (0)54 54 790 980, +856 (0)54 790 982, ແຟັກ:+856 (0)54 790 981
E-mail: cs.bkx@acledabank.com.la

## ສາຂາ ຄຳມ່ວນ

ອາຄານເລກທີ124,125, ຖະໜົນເລກທີ 13 ໃຕ້, ໜ່ວຍ 7, ບ້ານ ໜອງບົວຄຳ, ເມືອງ ທ່າແຂກ, ແຂວງ ຄຳມ່ວນ, ສປປ ລາວ.
ໂທ:+856 (0)51 251 440, ແຟັກ: +856 (0)51 251 441, E-mail: cs.kme@acledabank.com.la

## ສາຂາ ສະຫວັນນະເຂດ

ອາຄານເລກທີ 120,121,122 ແລະ 123, ຖະໜົນ ສີສະຫວ່າງວົງ, ໜ່ວຍ 6, ບ້ານ ໂພນສະຫວ່າງໃຕ້, ເມືອງ ໄກສອນພົມວິຫານ, ແຂວງ ສະຫວັນນະເຂດ, ສປປ ລາວ.
ໂທ: +856 (0)41 252 207, ແຟັກ: +856 (0)41 252 206, ອີເມລ: cs.svk@acledabank.com.la

## ສາຂາ ຈຳປາສັກ

ອາຄານໃໝ່, ຖະໜົນ 13 ໃຕ້, ໜ່ວຍ 12, ບ້ານ ໂພນສະຫວັນໃຕ້, ເມືອງ ປາກເຊ, ແຂວງ ຈຳປາສັກ, ສປປ ລາວ.
ໂທ: +856 (0)31 260 205, ແຟັກ: +856 (0)31 260 330, E-mail: cs.cps@acledabank.com.la

## ສາຂາ ດອນໜູນ

ຖະໜົນ 13 ໃຕ້, ໜ່ວຍ 12, ບ້ານ ດອນໜູນ, ເມືອງ ໄຊທານີ,  ນະຄອນຫຼວງວຽງຈັນ, ສປປ ລາວ.
ໂທ: +856 (0)21 740 988, ແຟັກ: +856 (0)21 740 988, E-mail: cs.don@acledabank.com.la

## ສາຂາ ຫຼວງພະບາງ

ໜ່ວຍ 07, ບ້ານ ສາຍລົມ, ນະຄອນຫຼວງພະບາງ , ແຂວງ ຫຼວງພະບາງ, ສປປ ລາວ.
ໂທ: +856 (0)71 260 747, ແຟັກ: +856 (0)71 260 748, E-mail: cs.lpb@acledabank.com.la

## ສາຂາ ໄຊຍະບູລີ

ຖະໜົນເລກທີ່ 04, ໜ່ວຍ 14, ບ້ານ ສີມຸງຄຸນ, ເມືອງໄຊຍະບູລີ, ແຂວງ ໄຊຍະບູລີ, ສປປ ລາວ.
ໂທ: +856 (0)74 212 206, ແຟັກ: +856 (0)74 212 207, E-mail: cs.xyl@acledabank.com.la

## ສາຂາ ສອງຄອນ

ອາຄານເລກທີ່ 079, ຖະໜົນ 13 ໃຕ້, ໜ່ວຍ 6, ບ້ານ ຫລັກເມືອງ, ເມືອງ ສອງຄອນ, ແຂວງ ສະຫວັນນະເຂດ, ສປປ ລາວ.
ໂທ: +856 (0)41 530 368, ແຟັກ: +856 (0)41 530 368, E-mail: cs.ske@acledabank.com.la

ສຳລັບຂໍ້ມູນເພີ່ມເຕີມ
ໂທ: +856 (0)21 264 998
ແຟັກ: +856 (0)21 264 995
ຕູ້ໄປສະນີ: 1555
ອີເມລ: acledabank@acledabank.com.la
ເວັບໄຊທ໌: www.acledabank.com.la